# ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020

# ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

## ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ບົດລາຍງານຂອງຄະນະບໍລິຫານ | 3 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 4 - 6 |
| ໃບລາຍງານຜົນການດຳເນີນງານ | 7 - 8 |
| ໃບລາຍງານຖານະການເງິນ | 9 - 11 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 12 |
| ໃບລາຍງານກະແສເງິນສົດ | 13 - 14 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 15 - 40 |

# ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

## ຂໍ້ມູນທົ່ວໄປ

**ທະນາຄານ**

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ (“ທະນາຄານ”) ແມ່ນທະນາຄານທຸລະກິດຕ່າງປະເທດທີ່ລົງທຶນ 100% ທີ່ໄດ້ດຳເນີນງານຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”). ທະນາຄານດຳເນີນທຸລະກິດເປັນສ່ວນໜຶ່ງຂອງ ກຸ່ມ ມາຣູຮານ ຍີ່ປຸ່ນ (“ກຸ່ມບໍລິສັດ”) ເຊິ່ງເປັນບໍລິສັດໃນເຄືອຂອງບໍລິສັດ ມາຣູຮານ ໃນປະເທດຍີ່ປຸ່ນ.

ທະນາຄານດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ເລກທີ 05/ທຫລ ລົງວັນທີ 11 ກຸມພາ 2013 ເຊິ່ງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ (“ທຫລ”).

ທຶນຈົດທະບຽນຂອງທະນາຄານເບື້ອງຕົ້ນແມ່ນ 300,000,000,000 ກີບ. ນະວັນທີ 31 ທັນວາ 2020, ທຶນຈົດທະບຽນຂອງທະນາຄານທີ່ຖອກແລ້ວແມ່ນ 431,535,000,000 ກີບ (31 ທັນວາ 2019: 385,060,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານ ການທະນາຄານ ແລະ ບໍລິການທາງການເງິນໃນ ສປປ ລາວ.

ສຳນັກງານໃຫ່ຍຂອງທະນາຄານຕັ້ງຢູ່ ໜ່ວຍ 14, ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ສະພາອຳນວຍການ**

ສະມາຊິກຂອງສະພາອຳນວຍການ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ດຣ. HAN Chang-woo | ປະທານ | ແຕ່ງຕັ້ງໃໝ່ວັນທີ 04 ເມສາ 2019 |
| ທ່ານ HAN, Ken | ສະມາຊິກ | ແຕ່ງຕັ້ງໃໝ່ວັນທີ 04 ເມສາ 2019 |
| ທ່ານ HAN, Yu | ສະມາຊິກ | ແຕ່ງຕັ້ງໃໝ່ວັນທີ 04 ເມສາ 2019 |
| ທ່ານ KIM, Vada | ສະມາຊິກ | ແຕ່ງຕັ້ງໃໝ່ວັນທີ 04 ເມສາ 2019 |
| ທ່ານ MASARU, Suzuki | ສະມາຊິກ | ແຕ່ງຕັ້ງວັນທີ 27 ເມສາ 2020 |

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Anthony CHIN | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 16 ກໍລະກົດ 2019 |
| ທ່ານ Yoshikoshi HAYATO | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 1 ກໍລະກົດ 2019 |
| ທ່ານ Sujit Guha THAKURTA | ຜູ້ຈັດການຝ່າຍຄວາມສ່ຽງ | ແຕ່ງຕັ້ງວັນທີ 18 ຕຸລາ 2019 |
| ທ່ານ ນາງ Esme LAW | ຜູ້ຈັດການຝ່າຍການເງິນ | ແຕ່ງຕັ້ງວັນທີ 7 ສິງຫາ 2020 |
| ທ່ານ ບຸນ ໄຊຍະລາດ | ຜູ້ຈັດການຝ່າຍຈັດຈຳໜ່າຍ | ແຕ່ງຕັ້ງວັນທີ 3 ເມສາ 2020 |
| ທ່ານ ວໍລະສິດ ແສງກຸນ | ຜູ້ຈັດການຝ່າຍບໍລິຫານຊັບພະຍາກອນມະນຸດ/ບໍລິຫານ | ແຕ່ງຕັ້ງວັນທີ 20 ສິງຫາ 2012 |
| ທ່ານ ສົມບັດ ດວງສິດສີ | ຜູ້ຈັດການຝ່າຍສິນເຊື່ອ | ແຕ່ງຕັ້ງວັນທີ 1 ກໍລະກົດ 2020 |
| ທ່ານ ນາງ ມອນຄຳ ໄຊບຸນເຮືອງ | ຫົວໜ້າຝ່າຍດູແລ | ແຕ່ງຕັ້ງວັນທີ 1 ຕຸລາ 2020 |
| ທ່ານ ນາງ ສຸມາລີ ສີວຽງໄຊ | ຜູ້ຈັດການຝ່າຍກວດສອບພາຍໃນ | ແຕ່ງຕັ້ງວັນທີ 1 ສິງຫາ 2014 |
| ທ່ານ JOHN, Jacob | ຜູ້ຈັດການຝ່າຍໄອທີ | ແຕ່ງຕັ້ງວັນທີ 7 ເມສາ 2014 |
| ທ່ານ Lee Chee Seong, Richard | ຜູ້ບໍລິຫານ | ແຕ່ງຕັ້ງວັນທີ 2 ກັນຍາ 2019 |
| ທ່ານ Vijayakumar SUBRAMANIAM, Ryan | ຜູ້ຈັດການຝ່າຍບໍລິຫານຂະບວນການທຸລະກິດດິຈິຕໍ | ແຕ່ງຕັ້ງວັນທີ 2 ມັງກອນ 2020 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງທະນາຄານພາຍໃນປີ ແລະ ນະວັນທີປິດລາຍງານສະບັບນີ້ແມ່ນ ທ່ານ Anthony CHIN, ຜູ້ອຳນວຍການໃຫຍ່.

**ນັກກວດສອບ**

ນັກກວດສອບບັນຊີ ຂອງທະນາຄານ ແມ່ນ ບໍລິສັດ ເອີນແອນຢັງ ລາວ ຈຳກັດ.

# ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ (“ທະນາຄານ”) ມີຄວາມຍິນດີນຳສະເໜີບົດລາຍງານຂອງເຈົ້າຂອງ ແລະ ເອກະສານລາຍງານການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງທະນາຄານແມ່ນ ຄວາມຮັບຜິດຊອບໃນການກະກຽມ ເອກະສານລາຍງານການເງິນຂອງແຕ່ລະປີການບັນຊີໃຫ້ສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ກົດລະບຽບ ທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ. ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງທະນາຄານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍ ຢູ່ໃນເອກະສານລາຍງານການເງິນ;
- ກະກຽມເອກະສານລາຍງານການເງິນບົນພື້ນຖານສືບເນື່ອງໃນການດຳເນີນທຸລະກິດ ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທະນາຄານ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງທະນາຄານຢ່າງສົມເຫດສົມຜົນຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານ ຂໍຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທີ່ ກ່າວມາຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານ ຂໍຖະແຫຼງວ່າເອກະສານລາຍງານການເງິນແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ອີງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ກົດລະບຽບທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຂອງຄະນະບໍລິຫານ:

ທ່ານ Anthony CHIN
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

EY
Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61078449/22224678-LAS

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ**

### *ຄຳເຫັນ*

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ມາຣູຮານເຈແປນ ລາວ ຈຳກັດ (“ທະນາຄານ”), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2020, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### *ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (ISA). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບ ທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບເງື່ອນໄຂເຫຼົ່ານີ້ ແລະ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າ ເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### *ບັນຫາທີ່ຄວນເອົາໃຈໃສ່ - ພື້ນຖານທາງບັນຊີ*

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານທະນາຄານຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.



A member firm of Ernst & Young Global Limited

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາທີ່ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດຖ້າມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

## *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.

- ສະຫຼຸບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງທະນາຄານ ກ່ຽວກັບບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເອີນແອນຢັງລາວ ຈຳກັດ**

Saman Wijaya Bandara
ຮຸ້ນສ່ວນ
ໃບອະນຸຍາດດຳເນີນການກວດສອບເລກທີ 014/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021



A member firm of Ernst & Young Global Limited

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| ລ/ດ | ລາຍການ | ບົດອະທິບາຍ ເລກທີ | 2020 ພັນກີບ | 2019 ພັນກີບ |
|---|---|---|---|---|
| A. | ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ | | | |
| 1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 3 | 57,729,434 | 57,473,350 |
| 2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 3 | (22,364,757) | (22,900,041) |
| I. | ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | 35,364,677 | 34,573,309 |
| 3 | ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 4 | 4,049,320 | 4,499,359 |
| 4 | ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 4 | (1,141,210) | (5,206,826) |
| 5 | ຂາດທຶນສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ | 5 | (2,358,146) | (1,582,667) |
| 6 | ຂາດທຶນສຸດທິຈາກການຊື້ຂາຍເຄື່ອງມືທາງການເງິນ | | - | (549,224) |
| II. | ລາຍຮັບສຸດທິຈາກການດຳເນີນງານ | | 35,914,641 | 31,733,951 |
| B | ລາຍຮັບ ແລະ ລາຍຈ່າຍອື່ນໆ | | | |
| 7 | ລາຍຮັບອື່ນໆຈາກການດຳເນີນງານ | 6 | 15,829,635 | 927,574 |
| 8 | ລາຍຈ່າຍຄ່າບໍລິຫານງານ | | (39,527,396) | (32,503,845) |
| 8.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນ ອື່ນໆ | 7 | (27,275,406) | (14,843,195) |
| 8.2 | ລາຍຈ່າຍອື່ນໆໃນການບໍລິຫານ | 8 | (12,251,990) | (17,660,650) |

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| ລ/ດ | ລາຍການ | ບົດອະທິບາຍ ເລກທີ | 2020 ພັນກີບ | 2019 ພັນກີບ |
|---|---|---|---|---|
| 9 | ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | 14 | (4,972,965) | (3,251,403) |
| 10 | ລາຍຈ່າຍອື່ນໆຈາກການດຳເນີນງານ | 9 | (1,038,742) | (162,910) |
| 11 | ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນສຸດທິ | 13.2 | (11,382,574) | (22,809,641) |
| III. | ລວມຍອດຂາດທຶນກ່ອນອາກອນ | | (5,177,401) | (26,066,274) |
| 12 | ອາກອນກຳໄລປະຈຳປີ | 18.2 | - | - |
| IV. | ຂາດທຶນຫລັງຫັກອາກອນ | | (5,177,401) | (26,066,274) |

ກະກຽມໂດຍ:

ທ່ານນາງ. Esme LAW
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ. Anthony CHIN
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

| ລ/ດ | ຊັບສິນ | ບົດອະທິບາຍ ເລກທີ | 31/12/2020 ພັນກີບ | 31/12/2019 ພັນກີບ |
|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກ ຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **168,803,407** | **129,351,660** |
| | 1. ເງິນສົດໃນຄັງ | 10 | 19,011,512 | 25,420,140 |
| | 2. ເງິນຝາກຢູ່ ທຫລ | 11 | 149,791,895 | 103,931,520 |
| II | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **305,756,365** | **206,496,790** |
| | 1. ເງິນຝາກກະແສລາຍວັນ | 12.1 | 11,529,965 | 11,921,590 |
| | 2. ເງິນຝາກມີກຳນົດ | 12.2 | 294,226,400 | 194,575,200 |
| III | **ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສະເພາະ** | **13** | **514,315,490** | **443,394,038** |
| IV | **ຊັບສິນບັດຄົງທີ່ ແລະ ສິດນຳໃຊ້ຊັບສິນ** | | **22,165,310** | **11,195,398** |
| | 1. ຊັບສິນບັດຄົງທີ່ພວມກໍ່ສ້າງ | 14.1 | 4,091,502 | 665,100 |
| | 2. ຊັບສິນບັດຄົງທີ່ມີຕົວຕົນ | 14.2 | 9,955,424 | 5,723,970 |
| | 3. ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 14.3 | 6,875,535 | 3,058,757 |
| | 4. ສິດນຳໃຊ້ຊັບສິນ | 14.2 | 1,242,849 | 1,747,571 |
| V | **ຊັບສິນອື່ນໆ** | | **16,671,413** | **8,779,465** |
| | 1. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 10,033,912 | 3,834,628 |
| | 2. ຊັບສິນອື່ນໆ | 15 | 6,637,501 | 4,944,837 |
| | **ລວມຊັບສິນ** | | **1,027,711,985** | **799,217,351** |

ທະນາຄານ ມາຣູຮານເຈແປນ ລາວ ຈໍາກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| *ລ/ດ* | *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ** | | **492,417,437** | **342,660,047** |
| | 1. ເງິນຝາກກະແສລາຍວັນ | 16.1 | 1,769,437 | 1,748,127 |
| | 2. ເງິນຝາກປະຈໍາ | 16.2 | 277,478,000 | 252,521,920 |
| | 3. ເງິນກູ້ຢືມຈາກທະນາຄານ ແລະ ເງິນທຶນຈາກແຫຼ່ງອື່ນໆ | 16.3 | 213,170,000 | 88,390,000 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **17** | **231,526,225** | **196,473,617** |
| | 1. ເງິນຝາກກະແສລາຍວັນ | | 11,450,932 | 9,179,987 |
| | 2. ເງິນຝາກປະຢັດ | | 106,293,876 | 84,561,222 |
| | 3. ເງິນຝາກປະຈໍາ | | 113,781,417 | 102,732,408 |
| III | **ໜີ້ສິນອື່ນໆ** | | **20,004,285** | **17,848,439** |
| | 1. ໜີ້ຕ້ອງຈ່າຍດອກເບ້ຍຄ້າງຈ່າຍ | | 8,258,420 | 7,008,380 |
| | 2. ໜີ້ຕ້ອງສົ່ງອາກອນ | 18.1 | 436,758 | 459,224 |
| | 3. ໜີ້ຕ້ອງສົ່ງອື່ນໆ | 19 | 11,309,107 | 10,380,835 |
| | **ລວມຍອດໜີ້ສິນ** | | **743,947,947** | **556,982,103** |
| IV | **ທຶນເຈົ້າຂອງ ແລະ ຄັງສໍາຮອງ** | | **283,764,038** | **242,235,248** |
| | 1. ທຶນຈົດທະບຽນ | **20** | 431,535,000 | 385,060,000 |
| | 2. ເງິນແຮທົ່ວໄປສໍາລັບກິດຈະກໍາສິນເຊື່ອ | 13.2 | 2,323,267 | 2,092,076 |
| | 3. ຂາດທຶນສະສົມ | | (150,094,229) | (144,916,828) |
| | **ລວມທຶນ** | | **283,764,038** | **242,235,248** |
| | **ລວມໜີ້ສິນ ແລະ ທຶນ** | | **1,027,711,985** | **799,217,351** |

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| ລ/ດ | ລາຍການ | ບົດອະທິບາຍ ເລກທີ | 2020 ພັນກີບ | 2019 ພັນກີບ |
|---|---|---|---|---|
| I | ຫລັກຊັບຄ້ຳປະກັນ ແລະ ຊວດຈຳ | | | |
| A | ຫລັກຊັບຄ້ຳປະກັນ ແລະ ຊວດຈຳເງິນກູ້ | | **1,352,547,757** | **1,164,506,534** |
| 1 | ຫລັກຊັບຄ້ຳປະກັນ ແລະ ຊວດຈຳສຳລັບ ເງິນກູ້ໃຫ້ລູກຄ້າ | | 1,352,547,757 | 1,164,506,534 |
| | **ລວມຍອດຫລັກຊັບຄ້ຳປະກັນ ແລະ ຊວດຈຳ** | | **1,352,547,757** | **1,164,506,534** |

ກະກຽມໂດຍ:

ທ່ານ ນາງ. Esme LAW
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ
MARUHAN Japan Bank Lao Co.,Ltd

ທ່ານ. Anthony CHIN
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ*<br>*ພັນກີບ* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ*<br>*ພັນກີບ* | *ຂາດທຶນສະສົມ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|---|
| **ຍອດເຫຼືອ ນະວັນທີ 1 ມັງກອນ 2020** | **385,060,000** | **2,092,076** | **(144,916,828)** | **242,235,248** |
| ຂາດທຶນສຸດທິພາຍໃນປີ | - | - | (5,177,401) | (5,177,401) |
| ການປະກອບທຶນ | 46,475,000 | - | - | 46,475,000 |
| ເງິນແຮທົ່ວໄປສຳລັບກິດຈະການດ້ານສິນເຊື່ອສຸດທິພາຍໃນປີ *(ບົດອະທິບາຍເລກທີ 13.2)* | - | 231,191 | - | 231,191 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | - | - | - |
| **ຍອດເຫຼືອນະວັນທີ 31 ທັນວາ 2020** | **431,535,000** | **2,323,267** | **(150,094,229)** | **283,764,038** |

ກະກຽມໂດຍ:

ທ່ານ ນາງ. Esme LAW
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ. Anthony CHIN
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານກະແສເງິນສົດ
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|
| **ຂາດທຶນສຸດທິກ່ອນອາກອນ** | | **(5,177,401)** | **(26,066,274)** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | 14 | 4,972,965 | 3,251,403 |
| ເງິນແຮສຳລັບກິດຈະກຳທາງສິນເຊື່ອ | 13.2 | 12,122,553 | 22,902,305 |
| ລາຍຮັບດອກເບ້ຍ | | (57,729,434) | (57,473,350) |
| ລາຍຈ່າຍດອກເບ້ຍ | | 22,364,757 | 22,900,041 |
| **ກະແສເງິນສົດໃຊ້ໃນ ການດຳເນີນງານກ່ອນການປ່ຽນແປງ ຂອງຊັບສິນ ແລະ ໜີ້ສິນ** | | **(23,446,557)** | **(34,485,875)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | | |
| ເງິນກູ້ໃຫ້ທະນາຄານອື່ນ | | (147,105,704) | (111,999,675) |
| ການລົງທຶນທາງການເງິນ - ຫຼັກຊັບຖືໄວ້ຈົນຄົບກຳນົດ | | - | 3,940,780 |
| ເງິນກູ້ໃຫ້ລູກຄ້າ | | (82,812,814) | 9,975,424 |
| ຊັບສິນອື່ນໆ | | (5,117,133) | 8,262,731 |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 149,757,391 | 64,294,734 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 35,052,608 | 20,993,416 |
| ໜີ້ສິນອື່ນໆ | | (22,466) | 4,176,957 |
| ດອກເບ້ຍທີ່ໄດ້ຮັບ | | 52,458,424 | 59,072,237 |
| ດອກເບ້ຍທີ່ຈ່າຍແລ້ວ | | (21,114,717) | (22,626,221) |
| **ກະແສເງິນສົດສຸດທິຈາກ/(ໃຊ້ໃນ)ກິດຈະກຳການດຳເນີນງານ** | | **(42,350,971)** | **1,604,508** |

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| *ລາຍການ* | *ບົດອະທິບາຍ ເລກທີ* | *2020 ພັນກີບ* | *2019 ພັນກີບ* |
|---|---|---|---|
| ກິດຈະກຳການລົງທຶນ | | | |
| ຊື້ຊັບສົມບັດ ແລະ ອຸປະກອນ ແລະ ຊັບສົມບັດບໍ່ມີຕົວຕົນ | | (12,518,410) | (7,279,104) |
| ກະແສເງິນສົດສຸດທິ ໃຊ້ເຂົ້າໃນກິດຈະກຳການລົງທຶນ | | **(12,518,410)** | **(7,279,104)** |
| ກິດຈະກຳທາງການເງິນ | | | |
| ການປະກອບທຶນ | | 46,475,000 | - |
| ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ | | **46,475,000** | **-** |
| ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ | | **(8,394,381)** | **(5,674,596)** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | **130,943,847** | **136,618,443** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ | **21** | **122,549,466** | **130,943,847** |

ກະກຽມໂດຍ:

ທ່ານ ນາງ. Esme LAW
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ. Anthony CHIN
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

## 1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການດຳເນີນທຸລະກິດ*

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ ("ທະນາຄານ") ແມ່ນທະນາຄານທຸລະກິດຕ່າງປະເທດທີ່ລົງທຶນ 100% ທີ່ໄດ້ດຳເນີນງານຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ທະນາຄານດຳເນີນທຸລະກິດເປັນສ່ວນໜຶ່ງຂອງ ກຸ່ມ ມາຣູຮານ ຍີ່ປຸ່ນ ("ກຸ່ມບໍລິສັດ") ເຊິ່ງເປັນບໍລິສັດໃນເຄືອຂອງບໍລິສັດ ມາຣູຮານ ໃນປະເທດຍີ່ປຸ່ນ.

ທະນາຄານດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ເລກທີ 05/ທຫລ ລົງວັນທີ 11 ກຸມພາ 2013 ເຊິ່ງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ("ທຫລ").

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານ ການທະນາຄານ ແລະ ບໍລິການທາງການເງິນໃນ ສປປ ລາວ.

*ທຶນຈົດທະບຽນ*

ທຶນຈົດທະບຽນຂອງທະນາຄານເລີ່ມຕົ້ນແມ່ນ 300,000,000,000 ກີບ. ນະວັນທີ 31 ທັນວາ 2020, ທຶນຈົດທະບຽນຂອງທະນາຄານທີ່ຖອກແລ້ວແມ່ນ 431,535,000,000 ກີບ (31 ທັນວາ 2019: 385,060,000,000 ກີບ).

*ທີ່ຕັ້ງສຳນັກງານ*

ສຳນັກງານໃຫ່ຍ ຂອງທະນາຄານ ຕັ້ງຢູ່ ໜ່ວຍ 14, ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ນະວັນທີ 31 ທັນວາ 2020 ພະນັກງານຢູ່ທະນາຄານ ມີທັງໝົດ 159 ຄົນ (31 ທັນວາ 2019 : 96 ຄົນ).

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ

### 2.1 *ຖະແຫຼງການການປະຕິບັດຕາມ*

ຄະນະບໍລິຫານຂອງທະນາຄານ ຖະແຫຼງວ່າເອກະສານລາຍງານການເງິນໄດ້ກະກຽມໂດຍສອດຄ່ອງກັບກົດໝາຍວ່າການບັນຊີຂອງ ສປປ ລາວ ແລະ ລະບຽບທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### 2.2 *ພື້ນຖານໃນການກະກຽມ*

ທະນາຄານ ໄດ້ບັນທຶກບັນຊີເປັນເງິນກີບ "ກີບ" ແລະ ກະກຽມເອກະສານລາຍງານການເງິນເປັນຫົວໜ່ວຍພັນກີບ "ພັນກີບ" ຕາມດຳລັດ ເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.2 *ພື້ນຖານໃນການກະກຽມ* (ຕໍ່)

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ຫລັກການ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ,ໃບລາຍງານຖານະການເງິນ,ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບບຸກຄົນທີ່ບໍ່ໄດ້ຮູ້ກ່ຽວກັບລະບຽບຫລັກການການບັນຊີແຫ່ງ ສປປ ລາວ, ຂັ້ນຕອນ ແລະ ການປະຕິບັດ. ນອກຈາກນັ້ນ, ເອກະສານລາຍງານຂອງທະນາຄານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນຂອງທະນາຄານ ແລະ ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫລັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງທະນາຄານແມ່ນ ເລີ່ມໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### 2.3 *ການປ່ຽນແປງຂອງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີໄດ້ຖືກຮັບຮອງໂດຍທະນາຄານໃນການກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນ ມີຄວາມສອດຄ່ອງກັບຫຼັກການທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019.

### 2.4 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫລັກການບັນຊີແບບຄ້າງຮັບຄ້າງຈ່າຍ ທີ່ນຳໃຊ້ວິທີຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາກູ້ຢືມ/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ (ລາຍລະອຽດໃນບົດອະທິບາຍເລກທີ 2.8 ສຳລັບຄວາມໝາຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະບໍລິຫານເຊື່ອວ່າ ຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

### 2.5 *ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ*

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມທັງການຊຳລະສະສາງທາງການຄ້າ), ຄ່າທຳນຽມເກີດຂຶ້ນຈາກທຸລະກຳການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຈາກການຄ້ຳປະກັນທາງການເງິນ.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຫລັກການເງິນສົດ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.6 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕ່ຳກວ່າ 30 ວັນ.

### 2.7 *ເງິນກູ້ໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ.

### 2.8 *ການຈັດຊັ້ນໜີ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ*

*ການຈັດຊັ້ນເງິນກູ້*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ("ທຫລ 512") ລົງວັນທີ 29 ມິຖຸນາ 2018 ແລະ ຄຳແນະນຳການຈັດຕັ້ງປະຕິບັດເລກທີ 898/ກຄທ ("ທຫລ 898") ລົງວັນທີ 14 ພະຈິກ 2018, ທະນາຄານ ໄດ້ຈັດຊັ້ນເງິນກູ້ ເປັນ 5 ກຸ່ມ ໂດຍອີງຕາມ ປະຫວັດການຊຳລະ ແລະ ປັດໄຈດ້ານຄຸນະພາບອື່ນໆ. ເງິນກູ້ ທີ່ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ຫລື ໜີ້ສົງໄສ (ກຸ່ມ D) ຫລື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL").

ທະນາຄານຍັງນຳໃຊ້ກົດລະບຽບ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ຄຳແນະນຳ 249/ທຫລ ລົງວັນທີ 11 ພຶດສະພາ 2020 ໂດຍ ທຫລ ກ່ຽວກັບການປັບໂຄງສ້າງເງິນກູ້ຢືມ, ການຂະຫຍາຍເວລາ ແລະ ການຮັກສາການຈັດຊັ້ນຂອງເງິນກູ້ເພື່ອຊ່ວຍຜູ້ກູ້ຢືມທີ່ໄດ້ຮັບຜົນກະທົບຈາກການລະບາດຂອງໂລກລະບາດ ໂຄວິດ 19. ດັ່ງນັ້ນ, ທະນາຄານໄດ້ປັບໂຄງສ້າງເງິນກູ້ທີ່ມີຄຸນນະພາບ ແລະ ຮັກສາການຈັດຊັ້ນໜີ້ຂອງເຂົາເຈົ້າຄືເກົ່າກ່ອນວັນທີ 01 ມັງກອນ 2020.

*ເງິນແຮ*

ອີງຕາມຂໍ້ຕົກລົງ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດ ທຫລ 898, ທະນາຄານຕ້ອງໄດ້ສ້າງເງິນແຮ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດເງິນແຮ (i)* | *ການບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ການບັນຊີສຳລັບ ສ່ວນປ່ຽນ ແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທີ່ເກີດດອກອອກຜົນ* | | | | |
| A | 0.5% | ຄັງເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບໃນການດຳເນີນງານອື່ນໆ |
| B | 3% | ຄັງເງິນແຮສະເພາະ | ຫັກຈາກຍອດເຫຼືອເງິນກູ້ | ລາຍຈ່າຍ/ລາຍຮັບໃນການດຳເນີນງານອື່ນໆ |
| *ເງິນກູ້ທີ່ບໍ່ເກີດດອກອອກຜົນ* | | | | |
| C | 20% | ຄັງເງິນແຮສະເພາະ | ຫັກຈາກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50% | ຄັງເງິນແຮສະເພາະ | ຫັກຈາກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100% | ຄັງເງິນແຮສະເພາະ | ຫັກຈາກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

**2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ**

**2.8 *ການຈັດຊັ້ນໜີ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ* (ຕໍ່)**

(i) ມູນຄ່າເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ລຸ່ມນີ້:

a. ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເຫຼືອເງິນກູ້
b. ເງິນແຮສະເພາະ = ອັດຕາເງິນແຮ x (ຍອດເຫຼືອເງິນກູ້ - ມູນຄ່າສ່ວນຫຼຸດຂອງຫຼັກຊັບຄ້ຳປະກັນ)

*ທະນາຄານໄດ້ເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຫຼັກຊັບຄ້ຳປະກັນໃນການຄິດໄລ່ການເງິນແຮຕາມທີ່ໄດ້ອະນຸຍາດ ຕາມຂໍ້ກຳນົດ ທຫລ 512 ແລະ ທຫລ 898*

(ii) ຍອດເຫຼືອເງິນແຮຂອງ*ເງິນກູ້ທີ່ເກີດດອກອອກຜົນທີ່ຈັດຢູ່ໃນກຸ່ມ A* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນຢູ່ *"ເງິນແຮທົ່ວໄປຈາກກິດຈະກຳສິນເຊື່ອ"* ພາຍໃຕ້ທຶນ ແລະ ຄັງແຮຂອງທະນາຄານ.

ຍອດເຫຼືອສະສົມຂອງເງິນແຮສຳລັບ*ເງິນກູ້ທີ່ບໍ່ເກີດດອກອອກຜົນ ແລະ ເງິນກູ້ທີ່ເກີດດອກອອກຜົນ ໃນກຸ່ມ B* ແມ່ນຖືກບັນທຶກໃນໃບລາຍງານຖານະການເງິນໃນ *"ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ".*

(iii) ການປ່ຽນແປງເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານໃນ *"ລາຍຈ່າຍຈາກການດຳເນີນງານອື່ນໆ"* ສຳລັບລາຍຈ່າຍເງິນແຮ ແລະ *"ລາຍຮັບຈາກການດຳເນີນງານອື່ນໆ"* ສຳລັບການເກັບຄືນລາຍຈ່າຍເງິນແຮ.

ການປ່ຽນແປງເງິນແຮສຳລັບ*ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ໃນ *"ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".*

**2.9 *ຊັບສິນບັດຄົງທີ່***

ຊັບສິນບັດຄົງທີ່ ລວມມີຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນ ປະກອບດ້ວຍອາຄານ ແລະ ການປັບປຸງອາຄານ, ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕິດຕັ້ງ, ອຸປະກອນຄອມພິວເຕີ ແລະ ພາຫະນະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີ ໂປແກຼມຄອມພິວເຕີ.

ຊັບສິນບັດຄົງທີ່ ແມ່ນສະແດງຕາມມູນຄ່າຕົ້ນທຶນ ລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ, (ຖ້າມີ).

ຕົ້ນທຶນຂອງຊັບສິນບັດໂດຍປະກອບດ້ວຍ ມູນຄ່າຊື້ບວກກັບ ຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງໃນການເຮັດໃຫ້ຊັບສິນບັດຄົງທີ່ຢູ່ໃນເງື່ອນໄຂສາມາດນຳໃຊ້ໄດ້.

ລາຍຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ແມ່ນຈະຖືກຕີເປັນຕົ້ນທຶນ ແລະ ຄ່າໃຊ້ຈ່າຍສຳລັບການບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫລື ຂາດທຶນທີ່ມາຈາກການສະສາງອອກຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.10 *ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່*

ຄ່າຫລຸ້ຍຫ້ຽນຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກໍານົດໃຊ້ຕະຫຼອດການຄາດຄະເນອາຍຸການນໍາໃຊ້ຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍ ສ່ວຍສາອາກອນຂອງ ສປປ ລາວ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2020 ອອກໂດຍປະທານສະພາແຫ່ງຊາດ, ອັດຕາການທີ່ຖືກນໍາໃຊ້ປະຈໍາປີມີດັ່ງນີ້:

| | |
|---|---|
| ອາຄານ ແລະ ການປັບປຸງອາຄານ | 10% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນິເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 20% |
| ພາຫະນະ | 20% |
| ຄອມພິວເຕີ ຊັອບແວ | 20% |

### 2.11 *ຄັງສະສົມຕາມລະບຽບການ*

ພາຍໃຕ້ຂໍ້ກໍານົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ບັນດາທະນາຄານທຸລະກິດ ຕ້ອງໄດ້ແບ່ງຜົນກໍາໄລສຸດທິເພື່ອນໍາໄປສ້າງຄັງສໍາຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສໍາຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ

ອີງຕາມມາດຕາ 156, ກົດໝາຍວິສາຫະກິດ ລົງວັນທີ 26 ທັນວາ 2013 ທະນາຄານຕ້ອງຈັດສັນກໍາໄລ 10% ຫຼັງຈາກຫັກອາກອນໃນແຕ່ລະປີໃຫ້ເປັນເງິນຄັງສໍາຮອງຕາມກົດໝາຍ. ເມື່ອຄັງສໍາຮອງເຖິງ 50% ຂອງທຶນຈົດທະບຽນ, ທະນາຄານ ອາດຢຸດການສໍາຮອງດັ່ງກ່າວ, ຍົກເວັ້ນແຕ່ກົດໝາຍຈະກໍານົດໄວ້ເປັນຢ່າງອື່ນ.

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຄວນຖືກສ້າງຂຶ້ນບົນພື້ນຖານການຕັດສິນໃຈຂອງຄະນະບໍລິຫານ.

ເນື່ອງຈາກວ່າທະນາຄານມີການຂາດທຶນສະສົມ, ທະນາຄານບໍ່ໄດ້ສ້າງຄັງສໍາຮອງຕາມລະບຽບການສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020.

### 2.12 *ການເຊົ່າ*

#### 2.12.1. *ສິດນໍາໃຊ້ຊັບສິນ*

ເມື່ອເລີ່ມຕົ້ນສັນຍາການເຊົ່າ, ທະນາຄານຈະປະເມີນວ່າ ສັນຍາເຊົ່ານັ້ນແມ່ນ ຫຼື ປະກອບມີຂໍ້ຕົກລົງໃນການເຊົ່າທີ່ອີງໃສ່ສັນຍາການເຊົ່າທີ່ສື່ໄປເຖິງຜູ້ຊົມໃຊ້ (ຜູ້ເຊົ່າ) ມີສິດຄວບຄຸມການນໍາໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນໄລຍະເວລາໃດໜຶ່ງ ຫຼື ບໍ ຊຶ່ງເປັນການແລກປ່ຽນ. ຖ້າໃນສັນຍາໜຶ່ງມີປະກອບມີຫຼາຍກວ່າໜຶ່ງອົງປະກອບຂອງການໃຫ້ເຊົ່າ ຫຼື ການປະສົມປະສານການໃຫ້ເຊົ່າ ແລະ ທຸລະກໍາການບໍລິການໃຫ້ເຊົ່າ, ການພິຈາລະນາ ແມ່ນຈະແບ່ງສ່ວນເຂົ້າລາຍການໃຫ້ເຊົ່າແຕ່ລະອັນ ແລະສະຫຼຸບອົງປະກອບທີ່ບໍ່ແມ່ນລາຍການໃຫ້ເຊົ່າ ແລະ ການວັດແທກຄືນໃໝ່ຂອງສັນຍາແຕ່ລະອັນ ອີງໃສ່ລາຄາຂາຍແຍກສ່ວນຂອງແຕ່ລະອົງປະກອບເຫຼົ່ານັ້ນ. ທະນາຄານຈະ ລວມອົງປະກອບຂອງການເຊົ່າ ແລະ ລາຍການທີ່ບໍ່ແມ່ນການເຊົ່າເຂົ້າກັນ, ໃນກໍລະນີ ທີ່ບໍ່ສາມາດແຍກສ່ວນປະກອບລາຍການທີ່ບໍ່ແມ່ນການເຊົ່າໄດ້.

## 2. ສະຫຼຸບນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)

### 2.12 *ການເຊົ່າ* (ຕໍ່)

#### 2.12.1. *ສິດນຳໃຊ້ຊັບສິນ* (ຕໍ່)

ທະນາຄານຈະຮັບຮູ້ ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນການເຊົ່າ (ຕົວຢ່າງ, ວັນທີ ທີ່ຊັບສິນພ້ອມໃຊ້ງານ). ສິດນຳໃຊ້ຊັບສິນແມ່ນຖືກວັດແທກດ້ວຍມູນຄ່າຕົ້ນທຶນ ຫັກລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ແລະ ດັດແກ້ສຳລັບການວັດແທກຄືນໃໝ່ຂອງໜີ້ສິນຄ່າເຊົ່າ. ມູນຄ່າຕົ້ນທຶນຂອງສິດນຳໃຊ້ຊັບສິນແມ່ນລວມເອົາຈຳນວນຂອງໜີ້ສິນທີ່ເປັນການເຊົ່າທີ່ໄດ້ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າ ທີ່ໄດ້ປະຕິບັດໄປແລ້ວ ຫຼື ກ່ອນມື້ທີ່ເລີ່ມຕົ້ນນຳໃຊ້, ບວກຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນທີ່ເກີດຂຶ້ນ ແລະ ການຄາດຄະເນຄ່າໃຊ້ຈ່າຍໃນການຮື້ຖອນ ແລະ ເຄື່ອນຍ້າຍຊັບສິນ ຫຼື ການຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ມັນຕັ້ງຢູ່, ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ. ໄລຍະເວລາການເຊົ່າລວມເຖິງໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍ ຖ້າຫາກວ່າກຸ່ມບໍລິສັດມີຄວາມໝັ້ນໃຈໃນການໃຊ້ທາງເລືອກນັ້ນ. ຍົກເວັ້ນ ກໍລະນີທີ່ທະນາຄານມີຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າຈະໄດ້ຮັບກຳມະສິດໃນຊັບສິນທີ່ໃຫ້ເຊົ່າເມື່ອສິ້ນສຸດໄລຍະເວລາການເຊົ່າ, ການຮັບຮູ້ສິດນຳໃຊ້ຊັບສິນໃຫ້ເປັນຄ່າຫຼຸ້ຍຫ້ຽນບົນພື້ນຖານຮູບແບບການຄິດໄລ່ແບບເສັ້ນຊື່ຕາມອາຍຸການໃຊ້ງານ. ສິດນຳໃຊ້ຊັບສິນແມ່ນຂຶ້ນຢູ່ກັບການປະເມີນຄ່າເສື່ອມມູນຄ່າ.

#### 2.12.2. *ໜີ້ສິນຄ່າເຊົ່າ*

ນະວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໄໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມນະມື້ທີ່ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນດັ່ງກ່າວ.

#### 2.12.3. *ການເຊົ່າຊັບສິນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ*

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕ່ຳ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

## 2. ສະຫຼຸບນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)

### 2.12 *ການເຊົ່າ* (ຕໍ່)

#### 2.12.4. *ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະເວລາຂອງສັນຍາພ້ອມການຕໍ່ອາຍຸ*

ທະນາຄານໄດ້ກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ, ຫຼື ໄລຍະເວລາໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາເຊົ່າ. ນັ້ນແມ່ນການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈໃນການຕໍ່ອາຍຸສັນຍາເພື່ອດຳເນີນທຸລະກິດ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ທະນາຄານໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສຳຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ໃນການຄວບຄຸມ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດໃນການດຳເນີນງານ (ຫຼື ການບໍ່ດຳເນີນງານ) ທາງເລືອກໃນການຕໍ່ສັນຍາ (ຕົວຢ່າງ ການປ່ຽນແປງຍຸດທະສາດຂອງທຸລະກິດ). ທະນາຄານໄດ້ລວມເອົາໄລຍະເວລາຕໍ່ອາຍຸສັນຍາເຊົ່າສຳລັບການເຊົ່າສະຖານທີ່ ແລະ ອຸປະກອນໄອທີ ເນື່ອງຈາກຄວາມສຳຄັນຂອງຊັບສິນເຫຼົ່ານີ້ເຂົ້າໃນການດຳເນີນງານຂອງທະນາຄານ.

### 2.13 *ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາ*

ການເຄື່ອນໄຫວທີ່ເປັນສະກຸນເງິນເດີມທັງໝົດແມ່ນໄດ້ຖືກບັນທຶກເບື້ອງຕົ້ນໃນລະບົບບັນຊີທີ່ນຳໃຊ້ອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ. (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບ ນະວັນທີ 31 ທັນວາ 2020 ໄດ້ສະແດງຢູ່ຂ້າງລຸ່ມນີ້). ສ່ວນຜິດດ່ຽງເກີດຈາກການປ່ຽນຄ່າຂອງຊັບສິນ ແລະ ໜີ້ສິນທາງການເງິນໃນມື້ສ້າງໃບລາຍງານຖານະການເງິນແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ

| | 31/12/2020<br>*ກີບ* | 31/12/2019<br>*ກີບ* |
|---|---:|---:|
| ໂດລາ ສະຫະລັດ | 9,251 | 8,839 |
| ບາດ ໄທ | 329.90 | 298.54 |
| ເຢນ ຍີ່ປຸ່ນ | 88.20 | 79.89 |
| ເອີໂຣ | 9,690 | 9,690 |

### 2.14 *ອາກອນກຳໄລ*

ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລ ໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 (2019: 24%) ໂດຍອີງຕາມກົດໝາຍສ່ວຍສາອາກອນເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງວັນທີ 1 ມັງກອນ 2020. ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ມູນຄ່າທີ່ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງ ຫຼັງຈາກການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

### 2.15 *ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດພາຍຫລັງອອກການ*

ຜົນປະໂຫຍດພາຍຫລັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານບໍານານຂອງທະນາຄານໂດຍກອງທຶນບໍານານພາຍໃນ. ດັ່ງນັ້ນ, ທະນາຄານໄດ້ປະກອບສ່ວນເຂົ້າໃນຜົນປະໂຫຍດພາຍຫຼັງອອກການເຫຼົ່ານັ້ນໃນອັດຕາ 4% ຂອງເງິນເດືອນທັງໝົດຂອງພະນັກງານໃນແຕ່ລະເດືອນ. ທະນາຄານບໍ່ມີພັນທະອື່ນທີ່ກ່ຽວຂ້ອງກັບຜົນປະໂຫຍດພາຍຫລັງອອກການໃຫ້ພະນັກງານອີກ.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີລຸ່ມນີ້:

- ເມື່ອພະນັກງານຂາດທັກສະຄວາມຊໍານິຊໍານານ ຫຼື ສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ເມື່ອທະນາຄານພິຈາລະນາວ່າຈໍາເປັນຕ້ອງຫລຸດພະນັກງານເພື່ອປັບປຸງອົງການຈັດຕັ້ງຂອງການເຮັດວຽກໃນໜ່ວຍແຮງງານ.

ສໍາລັບການຍົກເລີກສັນຍາຈ້າງໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ທະນາຄານຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກເລີກຈ້າງໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2020, ບໍ່ມີພະນັກງານຖືກເລີກຈ້າງຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ທະນາຄານຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງທະນາຄານ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 6,138,283 | 3,780,851 |
| ເງິນກູ້ໃຫ້ລູກຄ້າ | 51,591,151 | 53,692,499 |
| | **57,729,434** | **57,473,350** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍຄ້າຍຄືກັນສຳລັບ:** | | |
| ທຸລະກຳລະຫວ່າງທະນາຄານ | (14,427,456) | (15,116,800) |
| ເງິນຝາກຂອງລູກຄ້າ | (7,937,301) | (7,783,241) |
| | **(22,364,757)** | **(22,900,041)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **35,364,677** | **34,573,309** |

## 4. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ກິດຈະກຳຊຳລະສະສາງ | 3,423,085 | 3,985,915 |
| ກິດຈະກຳອື່ນໆ | 626,235 | 513,444 |
| | **4,049,320** | **4,499,359** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:** | | |
| ທຸລະກຳກັບລູກຄ້າ | (740,658) | (106,538) |
| ກິດຈະກຳອື່ນໆ | (400,552) | (5,100,288) |
| | **(1,141,210)** | **(5,206,826)** |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **2,908,110** | **(707,467)** |

## 5. (ຂາດທຶນ)/ກຳໄລສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ກຳໄລຈາກການຊື້ ຂາຍເງິນຕາຕ່າງປະເທດ | 64,434 | 643,705 |
| ຂາດທຶນຈາກການຊື້ ຂາຍເງິນຕາຕ່າງປະເທດ | (2,422,580) | (2,226,372) |
| | **(2,358,146)** | **(1,582,667)** |

## 6. ລາຍໄດ້ອື່ນໆຈາກການດຳເນີນງານ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ເກັບຄືນເງິນແຮສໍາລັບເງິນກູ້ທີ່ເກີດດອກອອກຜົນ | - | 83,143 |
| ເກັບຄືນໜີ້ສູນທີ່ໄດ້ຖືກສະສາງ | 14,389,098 | 374,122 |
| ອື່ນໆ | 1,440,537 | 470,309 |
| | **15,829,635** | **927,574** |

## 7. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ຄ່າແຮງງານ ແລະ ເບັ້ຍລ້ຽງ | 22,758,798 | 13,163,453 |
| ຄ່າໃຊ້ຈ່າຍອື່ນໆກ່ຽວກັບພະນັກງານ | 4,516,608 | 1,679,742 |
| | **27,275,406** | **14,843,195** |

## 8. ລາຍຈ່າຍບໍລິຫານອື່ນໆ

| | 2020<br>*ພັນກີບ* | 2019<br>*ພັນກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | 1,929,397 | 1,446,276 |
| ຄ່ານໍ້າມັນ | 142,734 | 108,310 |
| ເຄື່ອງໃຊ້ຫ້ອງການ | 223,505 | 191,919 |
| ລາຍຈ່າຍຄ່າສິ່ງພິມ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 1,988,329 | 2,924,809 |
| ລາຍຈ່າຍຄ່າໂທລະຄົມມະນາຄົມ | 534,080 | 459,130 |
| ລາຍຈ່າຍສ້ອມແປງ ແລະ ບໍາລຸງຮັກສາ | 3,954,899 | 3,940,677 |
| ຄ່າໄຟຟ້າ ແລະ ນໍ້າປະປາ | 355,973 | 350,376 |
| ລາຍຈ່າຍປະກັນໄພ | 132,056 | 142,310 |
| ຄ່ານາຍໜ້າ | 117,838 | 2,799,213 |
| ຄ່າໃຊ້ຈ່າຍໃນການເດີນທາງ | 118,196 | 188,023 |
| ຄ່າບໍລິການຊ່ຽວຊານ | 293,860 | 2,051,871 |
| ອື່ນໆ | 2,461,123 | 3,057,736 |
| | **12,251,990** | **17,660,650** |

## 9. ລາຍຈ່າຍອື່ນໆໃນການດຳເນີນງານ

| | *2020* *ພັນກີບ* | *2019* *ພັນກີບ* |
|---|---|---|
| ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນທີ່ຫັກເປັນລາຍຈ່າຍ *(ບົດອະທິບາຍຊ້ອນທ້າຍ ເລກທີ 13.2)* | 739,979 | - |
| ອື່ນໆ | 298,763 | 162,910 |
| | **1,038,742** | **162,910** |

## 10. ເງິນສົດໃນຄັງ

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນສົດໃນຄັງ ທີ່ເປັນສະກຸນເງິນກີບ | 9,993,031 | 16,961,451 |
| ເງິນສົດໃນຄັງ ທີ່ເປັນສະກຸນເງິນຕາຕ່າງປະເທດ | 9,018,481 | 8,458,689 |
| | **19,011,512** | **25,420,140** |

## 11. ບັນຊີຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນຝາກກະແສລາຍວັນ | 92,007,989 | 93,602,117 |
| ເງິນຝາກພາກບັງຄັບ (*) | 11,303,278 | 10,323,775 |
| ເງິນຝາກພິເສດ (**) | 46,480,628 | 5,628 |
| | **149,791,895** | **103,931,520** |

ເງິນຝາກກັບທະນາຄານແຫ່ງ ສປປ ລາວ ລວມມີ ເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກພາກບັງຄັບ, ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

(*) ຕາມຂໍ້ກຳນົດ ຂອງທະນາຄານແຫ່ງ ສປປ ລາວ, ທະນາຄານໄດ້ຖືກຮຽກຮ້ອງ ໃຫ້ຮັກສາເງິນແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກພາກບັງຄັບເຊິ່ງ ຖືກຄິດໄລ່ ໃນອັດຕາ 4.00% ສຳລັບເງິນກີບ ແລະ 8.00% ສຳລັບສະກຸນເງິນຕາຕ່າງປະເທດ (ໃນປີ 2019 ແມ່ນ: 5.00% ແລະ 10.00%), ໃນທຸກໆ 2 ຄັ້ງຕໍ່ເດືອນ ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕໍ່າກວ່າ 12 ເດືອນ. ໃນປີດັ່ງກ່າວ, ທະນາຄານໄດ້ຮັກສາເງິນຝາກພາກບັງຄັບຂອງຕົນໃຫ້ສອດຄ່ອງກັບຄວາມຕ້ອງການຂອງ ທຫລ.

(**) ພາຍໃຕ້ດຳລັດເລກທີ 02 ຂອງ ທຫລ, ສາຂາຂອງທະນາຄານຕ່າງປະເທດຕ້ອງຮັກສາເງິນຝາກພິເສດຕໍ່າສຸດກັບ ທຫລ ຈຳນວນ 25% ຂອງທຶນຈົດທະບຽນທີ່ຖອກແລ້ວ ເພື່ອຄໍ້າປະກັນຄວາມສືບເນື່ອງຂອງການດຳເນີນງານຂອງທະນາຄານ. ອີງຕາມໜັງສືອະນຸມັດການນຳໃຊ້ເງິນຝາກພິເສດ ຈາກ ທຫລ ເລກທີ 157/ກຄທ ລົງວັນທີ 26 ກຸມພາ 2019 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ກ່ຽວກັບການນຳໃຊ້ເງິນແຮພິເສດ, ທະນາຄານບໍ່ໄດ້ນຳໃຊ້ເງິນແຮພິເສດ ຢູ່ ທຫລ. ວັນທີ 31 ທັນວາ 2020, ຍອດເຫຼືອບັນຊີເງິນຝາກພິເສດຂອງທະນາຄານແມ່ນ 46,480,628 ພັນກີບ.

## 12. ໜີ້ຕ້ອງຮັບຈາກທະນາຄານອື່ນ

### *12.1 ເງິນຝາກກະແສລາຍວັນ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 11,074,918 | 4,387,685 |
| ທະນາຄານ ເພີດແບັງ ສາຂາວຽງຈັນ | 51,519 | 49,459 |
| **ເງິນຝາກກະແສລາຍວັນກັບທະນາຄານຕ່າງປະເທດ** | | |
| ທະນາຄານ SATHAPANA ມະຫາຊົນ (*) | 201,084 | 187,734 |
| ທະນາຄານ KEB Hana ສາຂາໂຕກຽວ | 60,617 | 1,277,585 |
| ທະນາຄານ ໄທພານິດ ຈຳກັດ ສຳນັກງານໃຫຍ່ | 141,827 | 6,019,127 |
| | **11,529,965** | **11,921,590** |

*(*) ຊື່ເກົ່າແມ່ນທະນາຄານ ມາຣູຮານ ເຈແປນ ມະຫາຊົນ, ກຳປູເຈຍ.*

### *12.2 ເງິນຝາກມີກຳນົດ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| **ເງິນຝາກມີກຳນົດຢູ່ທະນາຄານພາຍໃນປະເທດ** | | |
| ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ | 27,753,000 | 70,712,000 |
| ທະນາຄານ ຫວຽດຄອມ ລາວ ຈຳກັດ | 37,004,000 | 79,668,200 |
| ທະນາຄານ ຫວຽດຕິນ ລາວ ຈຳກັດ | 18,502,000 | 44,195,000 |
| ທະນາຄານ ລາວຈີນ ຈຳກັດ | 22,202,400 | - |
| ທະນາຄານ ອິນໂດຈີນ ຈຳກັດ | 64,757,000 | - |
| ທະນາຄານ ເອັສທີ ຈຳກັດ | 27,753,000 | - |
| ທະນາຄານ ໄຊງ່ອນ - ຮາໂນ່ຍ ລາວ ຈຳກັດ | 47,753,000 | - |
| ທະນາຄານ ພົງສະຫວັນ ລາວ ຈຳກັດ | 18,502,000 | - |
| ທະນາຄານ ຮ່ວມພັດທະນາ ຈຳກັດ | 30,000,000 | - |
| | **294,226,400** | **194,575,200** |

ເງິນຝາກມີກຳນົດທີ່ເປັນສະກຸນເງິນໂດລາ ມີກຳນົດ 3 ຫາ 6 ເດືອນ ແລະ ມີອັດຕາດອກເບ້ຍ 1.60% ຫາ 3.55% ຕໍ່ປີ. ເງິນຝາກມີກຳນົດທີ່ເປັນສະກຸນເງິນບາດ ມີກຳນົດ 3 ເດືອນ ແລະ ມີອັດຕາດອກເບ້ຍ 1.65% ຕໍ່ປີ. ເງິນຝາກມີກຳນົດທີ່ເປັນສະກຸນເງິນກີບ ມີກຳນົດ 3 ເດືອນ ແລະ ມີອັດຕາດອກເບ້ຍ 3.60% ຕໍ່ປີ ຫາ 3.65% ຕໍ່ປີ.

## 13. ເງິນກູ້ໃຫ້ລູກຄ້າ, ມູນຄ່າສຸດທິເງິນແຮສະເພາະ

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນກູ້ໃຫ້ແກ່ລູກຄ້າ | 524,954,202 | 448,500,682 |
| ລົບ ເງິນແຮສະເພາະ | (10,638,712) | (5,106,644) |
| *ລວມມີ:* | | |
| *ເງິນແຮສະເພາະທີ່ບໍ່ເກີດດອກອອກຜົນ* | *(9,455,652)* | *(4,432,372)* |
| *ເງິນແຮສະເພາະສຳລັບເງິນກູ້ທີ່ຄວນເອົາໃຈໃສ່* | *(1,183,060)* | *(674,272)* |
| | **514,315,490** | **443,394,038** |

ອັດຕາດອກເບ້ຍເງິນກູ້ໃຫ້ລູກຄ້າໃນປີແມ່ນມີດັ່ງນີ້:

| | *2020* *ອັດຕາດອກເບ້ຍ* *% ຕໍ່ປີ* | *2019* *ອັດຕາດອກເບ້ຍ* *% ຕໍ່ປີ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າ ເປັນສະກຸນເງິນກີບ | 3.00% - 14.70% | 3.00% - 14.68% |
| ເງິນກູ້ ແລະ ເງິນລ່ວງໜ້າ ເປັນສະກຸນເງິນໂດລາ | 10.00% | 10.00% |

### *13.1 ວິເຄາະເງິນກູ້ໃຫ້ລູກຄ້າ*

*ວິເຄາະຕາມສະກຸນເງິນ*

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນກູ້ ເປັນສະກຸນເງິນ ກີບ | 524,954,202 | 447,617,365 |
| ເງິນກູ້ ເປັນສະກຸນເງິນ ໂດລາ | - | 883,317 |
| | **524,954,202** | **448,500,682** |

*ວິເຄາະຕາມສະພາບເງິນກູ້*

| | *31/12/2020* *ພັນກີບ* | *31/12/2019* *ພັນກີບ* |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 504,380,817 | 440,890,762 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | 20,573,385 | 7,609,920 |
| | **524,954,202** | **448,500,682** |

## 13. ເງິນກູ້ໃຫ້ລູກຄ້າ, ມູນຄ່າສຸດທິເງິນແຮສະເພາະ (ຕໍ່)

### *13.1 ວິເຄາະເງິນກູ້ໃຫ້ລູກຄ້າ* (ຕໍ່)

*ວິເຄາະຕາມມື້ຄົບກຳນົດເດີມ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---:|---:|
| ເງິນກູ້ໄລຍະສັ້ນ | 16,904,171 | 15,355,895 |
| ເງິນກູ້ໄລຍະກາງ | 105,714,027 | 86,458,713 |
| ເງິນກູ້ໄລຍະຍາວ | 402,336,004 | 346,686,074 |
| | **524,954,202** | **448,500,682** |

*ວິເຄາະຕາມປະເພດຂະແໜງທຸລະກິດ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---:|---:|
| ຂະແໜງອຸດສາຫະກຳ | 4,903,908 | 5,457,786 |
| ຂະແໜງກໍ່ສ້າງ | 3,136,746 | 86,287 |
| ຂະແໜງປະກອບວັດຖຸ-ເຕັກນິກ | 280,819 | - |
| ຂະແໜງກະສິກຳ ແລະ ປ່າໄມ້ | 8,447,881 | - |
| ຂະແໜງການຄ້າ | 36,643,617 | 15,783,329 |
| ຂະແໜງຂົນສົ່ງ ແລະ ໄປສະນີ | 657,512 | 950,151 |
| ຂະແໜງບໍລິການ | 21,777,900 | 6,503,968 |
| ຂະແໜງຫັດຖະກຳ | 8,573,822 | 854,439 |
| ຂະແໜງອື່ນໆ | 440,531,997 | 418,864,722 |
| | **524,954,202** | **448,500,682** |

## 13. ເງິນກູ້ໃຫ້ລູກຄ້າ, ມູນຄ່າສຸດທິເງິນແຮສະເພາະ (ຕໍ່)

### *13.2 ເງິນແຮສຳລັບໜີ້ເສຍ*

ການປ່ຽນແປງເງິນແຮສຳລັບໜີ້ເສຍຂອງທະນາຄານສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ* | *ເງິນແຮສະເພາະສຳລັບເງິນກູ້ທີ່ຄວນເອົາໃຈໃສ່* | *ເງິນແຮທົ່ວໄປ* | *ລວມ* |
|---|---|---|---|---|
| | *ພັນກີບ* | *ພັນກີບ* | *ພັນກີບ* | *ພັນກີບ* |
| **ຍອດເຫຼືອ ນະວັນທີ 1 ມັງກອນ 2020** | **4,432,372** | **674,272** | **2,092,076** | **7,198,720** |
| ລາຍຈ່າຍທີ່ຫັກເປັນເງິນແຮສຸດທິພາຍໃນປີ | - | 508,788 | 231,191 | 739,979 |
| ລາຍຈ່າຍທີ່ຫັກເປັນເງິນແຮສຸດທິສຳລັບໜີ້ບໍ່ເກີດດອກອອກຜົນພາຍໃນປີ | 11,382,574 | - | - | 11,382,574 |
| ສະສາງອອກພາຍໃນປີ | (6,359,294) | - | - | (6,359,294) |
| ຜົດຕ່ຽງຈາກອັດຕາແລກປ່ຽນ | - | - | - | - |
| **ຍອດເຫຼືອທ້າຍນະວັນທີ 31 ທັນວາ 2020** | **9,455,652** | **1,183,060** | **2,323,267** | **12,961,979** |

## 13. ເງິນກູ້ໃຫ້ລູກຄ້າ, ມູນຄ່າສຸດທິເງິນແຮສະເພາະ (ຕໍ່)

### *13.2 ເງິນແຮສຳລັບໜີ້ເສຍ* (ຕໍ່)

ລາຍລະອຽດການຈັດຊັ້ນໜີ້ ແລະ ເງິນແຮຕາມຂໍ້ກຳນົດຂອງເລກທີ 512/ທຫລ ມີດັ່ງລຸ່ມນີ້:

| *ການຈັດຊັ້ນໜີ້* | *ຍອດເຫຼືອເງິນກູ້*<br>*ພັນກີບ* | *ເງິນແຮສະເພາະ*<br>*ພັນກີບ* | *ເງິນແຮທົ່ວໄປ*<br>*ພັນກີບ* | *ລວມເງິນແຮທັງໝົດ*<br>*ພັນກີບ* |
|---|---|---|---|---|
| - *ໜີ້ປົກກະຕິ* | *464,653,347* | - | *2,323,267* | *2,323,267* |
| - *ໜີ້ຄວນເອົາໃຈໃສ່* | *39,435,344* | *1,183,060* | - | *1,183,060* |
| - *ໜີ້ຕໍ່າກວ່າມາດຕະຖານ* | *6,086,067* | *1,217,213* | - | *1,217,213* |
| - *ໜີ້ສົງໃສ* | *13,082,009* | *6,541,004* | - | *6,541,004* |
| - *ໜີ້ສູນ* | *1,697,435* | *1,697,435* | - | *1,697,435* |
| ລວມ | **524,954,202** | **10,638,712** | **2,323,267** | **12,961,979** |

## 14. ຊັບສິນບັດຄົງທີ່ ແລະ ສິດນຳໃຊ້ຊັບສິນ

### *14.1 ຊັບສິນບັດພວມດຳເນີນການກໍ່ສ້າງ*

| | *ຊ້ອບແວ*<br>*ພັນກີບ* | *ອຸປະກອນ*<br>*ຄອມພິວເຕີ*<br>*ພັນກີບ* | *ເຄື່ອງໃຊ້*<br>*ຫ້ອງການ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2020:** | 665,100 | - | - | 665,100 |
| ຮັບເຂົ້າເພີ່ມ | 4,927,349 | 3,955,647 | 900,308 | 9,783,304 |
| ໂອນຍ້າຍໄປເປັນຊັບສິນບັດຄົງທີ່ | (2,595,747) | (3,322,712) | (428,444) | (6,356,902) |
| **ຍອດເຫຼືອທ້າຍນະວັນທີ 31 ທັນວາ 2020** | **2,996,702** | **632,936** | **461,865** | **4,091,502** |

## 14. ຊັບສິນບັດຄົງທີ່ ແລະ ສິດນຳໃຊ້ຊັບສິນ (ຕໍ່)

### *14.2 ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ສິດນຳໃຊ້ຊັບສິນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ແລະ ສິດນຳໃຊ້ຊັບສິນໃນປີມີດັ່ງນີ້:

| | *ອາຄານ ແລະ ການປັບປຸງ* *ພັນກີບ* | *ເຄື່ອງໃຊ້ຫ້ອງການ* *ພັນກີບ* | *ເຟີນີເຈີ ແລະ ເຄື່ອງຕິດຕັ້ງ* *ພັນກີບ* | *ອຸປະກອນຄອມພິວເຕີ* *ພັນກີບ* | *ພາຫະນະ* *ພັນກີບ* | *ສິດນຳໃຊ້ຊັບສິນ ການເຊົ່າຫ້ອງການ* *ພັນກີບ* | *ລວມ* *ພັນກີບ* |
|---|---|---|---|---|---|---|---|
| **ຕົ້ນທຶນ:** | | | | | | | |
| ຍອດຍົກມາ | 10,469,033 | 6,743,392 | 2,307,010 | 5,823,597 | 1,317,317 | 2,138,068 | 28,798,417 |
| ຮັບເຂົ້າເພີ່ມ | - | 450,837 | 136,204 | 3,350,045 | 2,450,000 | - | 6,387,086 |
| ຍອດເຫຼືອທ້າຍ | 10,469,033 | 7,194,229 | 2,443,214 | 9,173,642 | 3,767,317 | 2,138,068 | 35,185,503 |
| **ຫຼູ້ຍຫ້ຽນສະສົມ:** | | | | | | | |
| ຍອດຍົກມາ | 7,204,208 | 6,300,540 | 2,089,266 | 4,147,189 | 1,195,176 | 390,497 | 21,326,876 |
| ຄ່າຫຼູ້ຍຫ້ຽນພາຍໃນປີ | 1,046,903 | 171,108 | 64,451 | 586,054 | 287,116 | 504,722 | 2,660,354 |
| ຍອດເຫຼືອທ້າຍ | 8,251,111 | 6,471,648 | 2,153,717 | 4,733,243 | 1,482,292 | 895,219 | 23,987,230 |
| **ມູນຄ່າສຸດທິ:** | | | | | | | |
| ຍອດຍົກມາ | 3,264,825 | 442,852 | 217,744 | 1,676,408 | 122,141 | 1,747,571 | 7,471,541 |
| ຍອດເຫຼືອທ້າຍ | 2,217,922 | 722,581 | 289,497 | 4,440,399 | 2,285,025 | 1,242,849 | 11,198,273 |

### 14.2 *ຊັບສິນບັດຄິງທີ່ທີ່ມີຕົວຕົນ ແລະ ສິດນຳໃຊ້ຊັບສິນ* (ຕໍ່)

ການກຳນົດໄວ້ຂ້າງລຸ່ມນີ້ແມ່ນຈຳນວນຍອດຍົກມາຂອງພັນທະໜີ້ສິນຂອງສັນຍາເຊົ່າຊື້ (ໄດ້ລວມຢູ່ພາຍໃຕ້ 'ໜີ້ສິນອື່ນໆທີ່ຕ້ອງຊຳລະໃນ (ບົດອະທິບາຍຊ້ອນທ້າຍ ເລກທີ 19) ແລະ ການເຄື່ອນໄຫວ ສຳລັບປີສິ້ນສຸດວັນທີ 31 ທັນວາ 2020 ແລະ 31 ທັນວາ 2019:

| | *2020* | *2019* |
|---|---:|---:|
| ນະວັນທີ 1 ມັງກອນ | 975,028 | - |
| ສ່ວນເພີ່ມ | - | 2,138,069 |
| ລາຍຈ່າຍດອກເບ້ຍ | 69,2001 | 36,380 |
| ການຊຳລະ | (520,647) | (1,199,421) |
| **ນະວັນທີ 31 ທັນວາ** | **523,582** | **975,028** |

### 14.3 *ຊັບສິນບັດຄິງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄິງທີ່ບໍ່ມີຕົວຕົນພາຍໃນປີ ມີດັ່ງນີ້:

| | *ຊັອບແວຄອມພິວເຕີ*<br>*ພັນກີບ* |
|---|---:|
| **ຕົ້ນທຶນ:** | |
| ຍອດຍົກມາ | 20,423,110 |
| ຮັບເຂົ້າເພີ່ມ | 6,131,323 |
| ການຫຼຸດລົງອື່ນໆ | (4,642) |
| ຍອດເຫຼືອທ້າຍ | 26,549,791 |
| **ຫຼຸ້ຍຫ້ຽນສະສົມ:** | |
| ຍອດຍົກມາ | 17,364,353 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 2,312,611 |
| ການຫຼຸດລົງອື່ນໆ | (2,708) |
| ຍອດເຫຼືອທ້າຍ | 19,674,256 |
| **ມູນຄ່າສຸດທິ:** | |
| ຍອດຍົກມາ | 3,058,757 |
| ຍອດທ້າຍປີ | 6,875,535 |

### 15. ຊັບສິນອື່ນໆ

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---:|---:|
| ລາຍຈ່າຍລ່ວງໜ້າ | 5,171,592 | 4,799,859 |
| ອື່ນໆ | 1,465,909 | 144,978 |
| | **6,637,501** | **4,944,837** |

## 16. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

### *16.1 ເງິນຝາກກະແສລາຍວັນ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| **ຍອດເຫຼືອເງິນຝາກທະນາຄານພາຍໃນ** | | |
| ທະນາຄານ ແຄນນາເດຍ ລາວ ຈຳກັດ | 468,967 | 299,975 |
| ທະນາຄານ ເຟີດແບັງ ຈຳກັດ, ສາຂາວຽງຈັນ | 1,280,630 | 1,448,152 |
| ທະນາຄານ ສົ່ງເສີມກະສິກຳ | 19,840 | - |
| | **1,769,437** | **1,748,127** |

### *16.2 ເງິນຝາກມີກຳນົດ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| **ເງິນຝາກມີກຳນົດກັບທະນາຄານພາຍໃນ** | | |
| ທະນາຄານ ເຟີດແບັງ ຈຳກັດ, ສາຂາວຽງຈັນ | 66,000,000 | 61,000,000 |
| ທະນາຄານ ແຄນນາເດຍ ລາວ ຈຳກັດ | 27,300,000 | 2,500,000 |
| ທະນາຄານ ສົ່ງເສີມກະສິກຳ | - | 47,551,920 |
| ທະນາຄານ ອິນໂດຈີນ | 61,000,000 | - |
| ທະນາຄານ ໄຊງ່ອນ-ເທືອງຕິນ ລາວ ຈຳກັດ | 48,502,000 | 20,000,000 |
| ທະນາຄານ ຫວຽດຄອມ ລາວ ຈຳກັດ | 36,676,000 | 78,470,000 |
| ທະນາຄານ ຫວຽດຕິນ ລາວ ຈຳກັດ | - | 43,000,000 |
| ທະນາຄານ ເອັສທີ ຈຳກັດ | 18,000,000 | - |
| ທະນາຄານ ລາວຈີນ ຈຳກັດ | 20,000,000 | - |
| | **277,478,000** | **252,521,920** |

ລາຍລະອຽດບັນຊີປະຈຳຈາກທະນາຄານອື່ນໃນວັນທີ 31 ທັນວາ 2020 ມີດັ່ງນີ້:

| | *ຈຳນວນເງິນ (ປ່ຽນເປັນ ສະກຸນເງິນກີບ)* | *ສະກຸນເງິນ* | *ໄລຍະເວລາ* | *ອັດຕາດອກເບ້ຍ (%ຕໍ່ປີ)* |
|---|---|---|---|---|
| ທະນາຄານ ເຟີດແບັງ ຈຳກັດ, ສາຂາວຽງຈັນ | 66,000,000 | ກີບ | 12 ເດືອນ | 5.10 - 6.50 |
| ທະນາຄານ ແຄນນາເດຍ ລາວ ຈຳກັດ | 27,300,000 | ກີບ | 3 - 6 ເດືອນ | 2.65 - 3.50 |
| ທະນາຄານ ອິນໂດຈີນ ຈຳກັດ | 61,000,000 | ກີບ | 6 - 12 ເດືອນ | 3.80 - 4.30 |
| ທະນາຄານ ໄຊງ່ອນ-ເທືອງຕິນ ລາວ ຈຳກັດ | 48,502,000 | ກີບ | 3 ເດືອນ | 3.30 - 3.50 |
| ທະນາຄານ ຫວຽດຄອມ ລາວ ຈຳກັດ | 36,676,000 | ກີບ | 3 ເດືອນ | 2.00 -2.20 |
| ທະນາຄານ ເອັສທີ ຈຳກັດ | 18,000,000 | ກີບ | 6 ເດືອນ | 3.80 |
| ທະນາຄານ ຫວຽດຕິນ ລາວ ຈຳກັດ | 20,000,000 | ກີບ | 3 - 6 ເດືອນ | 3.16 - 3.80 |
| | **277,478,000** | | | |

## 16. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

### *16.3 ເງິນກູ້ຢືມຈາກທະນາຄານ ແລະ ເງິນທຶນຈາກແຫຼ່ງອື່ນໆ*

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| **ເງິນກູ້ຢືມຈາກທະນາຄານ** | | |
| ທະນາຄານ MIZUHO BANK LTD, ສາຂາບາງກອກ | 185,020,000 | 88,390,000 |
| **ເງິນທຶນຈາກແຫຼ່ງອື່ນໆ** | | |
| ທະນາຄານ ແຫ່ງ ສປປ ລາວ | 2,150,000 | - |
| ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ກະຊວງອຸດສາຫະກຳ ແລະ ການຄ້າ | 26,000,000 | - |
| | **213,170,000** | **88,390,000** |

ລາຍລະອຽດຂອງເງິນກູ້ຢືມ ແລະ ເງິນທຶນ ນະວັນທີ 31 ທັນວາ 2020 ມີດັ່ງນີ້:

| | *ຍອດເຫຼືອທ້າຍ (ທຽບເທົ່າເງິນກີບ) ພັນກີບ* | ສະກຸນເງິນ | ໄລຍະເວລາ | ອັດຕາດອກເບ້ຍ % ຕໍ່ປີ |
|---|---|---|---|---|
| ທະນາຄານ MIZUHO BANK LTD, ສາຂາ ບາງກອກ | 185,020,000 | ໂດລາ | 12 ເດືອນ | 2.20% |
| ທະນາຄານ ແຫ່ງ ສປປ ລາວ | 2,150,000 | ກີບ | 72 ເດືອນ | 3.00% |
| ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງກະຊວງອຸດສາຫະກຳ ແລະ ການຄ້າ | 26,000,000 | ກີບ | 11 ປີ | 0.00% |

## 17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | *31/12/2020 ພັນກີບ* | *31/12/2019 ພັນກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **11,450,932** | **9,179,987** |
| - ເປັນສະກຸນກີບ | 8,173,084 | 5,295,851 |
| - ເປັນສະກຸນເງິນຕາຕ່າງປະເທດ | 3,277,848 | 3,884,136 |
| **ເງິນຝາກປະຢັດ** | **106,293,876** | **84,561,222** |
| - ເປັນສະກຸນກີບ | 28,416,139 | 14,935,022 |
| - ເປັນສະກຸນເງິນຕາຕ່າງປະເທດ | 77,877,737 | 69,626,200 |
| **ເງິນຝາກມີກຳນົດ** | **113,781,417** | **102,732,408** |
| - ເປັນສະກຸນກີບ | 34,724,930 | 26,351,735 |
| - ເປັນສະກຸນເງິນຕາຕ່າງປະເທດ | 79,056,487 | 76,380,673 |
| | **231,526,225** | **196,473,617** |

## 17. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບໜີ້ຕ້ອງສົ່ງໃຫ້ກັບລູກຄ້າ ມີດັ່ງລຸ່ມນີ້:

| | 2020<br>*ອັດຕາດອກເບ້ຍ % ຕໍ່ປີ* | 2019<br>*ອັດຕາດອກເບ້ຍ % ຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນ ເປັນສະກຸນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນ ເປັນສະກຸນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດ ເປັນສະກຸນກີບ | 1.89% - 5.00% | 2.15% - 5.00% |
| ເງິນຝາກປະຢັດ ເປັນສະກຸນໂດລາ | 1.75% - 3.00% | 2.00% - 3.00% |
| ເງິນຝາກປະຢັດ ເປັນສະກຸນບາດ | 1.50% - 2.00% | 1.75% - 2.00% |
| ເງິນຝາກມີກຳນົດ ເປັນສະກຸນກີບ | 3.16% - 6.90% | 3.16% - 7.48% |
| ເງິນຝາກມີກຳນົດ ເປັນສະກຸນໂດລາ | 2.00% - 7.00% | 1.50% - 5.00% |
| ເງິນຝາກມີກຳນົດ ເປັນສະກຸນບາດ | 2.50% - 3.00% | 1.00% - 2.50% |

## 18. ອາກອນກຳໄລ

### *18.1 ອາກອນຕ້ອງຈ່າຍ*

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ອາກອນເງິນເດືອນ | 289,473 | 191,466 |
| ອາກອນທີ່ຫັກນະທີຈ່າຍ | 147,285 | 267,758 |
| | **436,758** | **459,224** |

## 18. ອາກອນກຳໄລ (ຕໍ່)

### *18.2 ອາກອນກຳໄລ*

ທະນາຄານມີຂໍ້ກຳນົດທີ່ຕ້ອງຈ່າຍອາກອນຂອງກຳໄລກ່ອນຫັກອາກອນທັງໝົດ ເຊິ່ງສອດຄ່ອງກັບກົດໝາຍສ່ວຍສາອາກອນ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ນັບແຕ່ວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2020.

ລາຍລະອຽດຂອງອາກອນກຳໄລສຳລັບປີ 2020 ແລະ 2019 ມີດັ່ງລຸ່ມນີ້:

| | *2020*<br>*ພັນກີບ* | *2019*<br>*ພັນກີບ* |
|---|---|---|
| ຂາດທຶນກ່ອນເສຍອາກອນ | (5,177,401) | (26,066,274) |
| *ດັດແກ້:* | | |
| ຂາດທຶນຈາກອັດຕາແລກປ່ຽນ ທີ່ບໍ່ໄດ້ເກີດຂຶ້ນຈິງ | - | 549,224 |
| ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ | 299,103 | 23,695 |
| **ຂາດທຶນຫຼັງຈາກອະນຸຍາດໃຫ້ຫັກ** | **(4,878,298)** | **(25,493,355)** |
| **ລາຍຈ່າຍອາກອນກຳໄລ, ໃນອັດຕາຕາມກົດໝາຍ 20% (2019:24%)** | - | - |
| ອາກອນກຳໄລຕ້ອງຈ່າຍໃນຕົ້ນປີ | - | - |
| ອາກອນກຳໄລໄດ້ຈ່າຍພາຍໃນປີ | - | - |
| **ອາກອນກຳໄລຕ້ອງຈ່າຍທ້າຍປີ** | - | - |

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ເນື່ອງຈາກວ່າກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆໄດ້ຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຫຼັງຈາກການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

*ການຍົກຍອດຂາດທຶນທາງອາກອນ*

ສຳລັບການຂາດທຶນຈາກອາກອນທີ່ເກີດຂຶ້ນໃນປີ 2020, ອີງຕາມກົດໝາຍວ່າດ້ວຍສວຍສາອາກອນສະບັບເລກທີ 64/ສພຊ, ລົງວັນທີ 18 ມິຖຸນາ 2019, ມາດຕາ 23, ສຳລັບການຂາດທຶນປະຈຳປີທີ່ໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຖືກຮັບຮູ້ຈາກເຈົ້າໜ້າທີ່ສວຍສາອາກອນ. ພາຍໃຕ້ກົດຫມາຍອາກອນໃນປັດຈຸບັນ, ທະນາຄານມີສິດທີ່ຈະຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກຳໄລຕ້ອງຈ່າຍທີ່ເກີດຂຶ້ນພາຍໃນ 5 ປີຫຼັງຈາກປີທີ່ເກີດການຂາດທຶນ.

ການຂາດທຶນຈາກອາກອນທີ່ເກີດຂຶ້ນໃນປີ 2019 ແລະ ປີຜ່ານມາ ທະນາຄານມີສິດທີ່ຈະຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກຳໄລຕ້ອງຈ່າຍທີ່ເກີດຂຶ້ນພາຍໃນ 3 ປີຫຼັງຈາກປີທີ່ເກີດການຂາດທຶນ, ອີງຕາມກົດໝາຍອາກອນຜ່ານມາ.

## 18. ອາກອນກຳໄລ (ຕໍ່)

### *18.2 ອາກອນກຳໄລພາຍໃນປີ*

ລາຍລະອຽດຂອງການຍົກຍອດຂາດທຶນທາງອາກອນທີ່ປະຕິບັດມີດັ່ງນີ້:

| *ປີ* | *ສາມາດນຳໃຊ້ເຖິງ* | *ຂາດທຶນເພີ່ມເຕີມໃນປີ*<br>*ພັນກີບ* | *ສາມາດນຳໃຊ້ໄດ້ຍອດທ້າຍປີ*<br>*ພັນກີບ* | *ມູນຄ່າທີ່ບໍ່ໄດ້ນຳໃຊ້ ແຕ່ສາມາດນຳໃຊ້ໄດ້ໃນປີໜ້າ*<br>*ພັນກີບ* | *ຂາດທຶນທາງອາກອນທີ່ບໍ່ໄດ້ນຳໃຊ້ໃນທ້າຍປີ*<br>*ພັນກີບ* |
|---|---|---|---|---|---|
| 2017 | 2022 | 40,905,992 | - | - | 40,905,992 |
| 2018 | 2023 | 5,831,734 | - | - | 5,831,734 |
| 2019 | 2024 | 25,493,355 | - | - | 25,493,355 |
| 2020 | 2025 | 4,878,298 | - | - | 4,878,298 |
| | | **77,109,379** | **-** | **-** | **77,109,379** |

## 19. ໜີ້ຕ້ອງສົ່ງອື່ນໆ

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ໜີ້ຕ້ອງສົ່ງຜູ້ສະໜອງ | 2,168,089 | 5,437,314 |
| ໜີ້ຕ້ອງສົ່ງລູກຈ້າງ | 6,427,431 | 2,953,510 |
| ໜີ້ສິນຄ່າເຊົ່າ | 523,582 | 975,026 |
| ອື່ນໆ | 2,190,005 | 1,014,985 |
| | **11,309,107** | **10,380,835** |

## 20. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວພາຍໃນປີແມ່ນສະແດງອອກດັ່ງລຸ່ມນີ້:

| | *2020*<br>*ພັນກີບ* | *2019*<br>*ພັນກີບ* |
|---|---|---|
| ຍອດຍົກມາ | 385,060,000 | 385,060,000 |
| ການປະກອບທຶນພາຍໃນປີ | 46,475,000 | - |
| **ຍອດເຫຼືອທ້າຍ** | **431,535,000** | **385,060,000** |

## 21. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31/12/2020*<br>*ພັນກີບ* | *31/12/2019*<br>*ພັນກີບ* |
|---|---|---|
| ເງິນສົດໃນຄັງ | 19,011,512 | 25,420,140 |
| ເງິນຝາກຢູ່ ທຫລ | 92,007,989 | 93,602,117 |
| ເງິນຝາກກະແສລາຍວັນກັບທະນາຄານອື່ນ | 11,529,965 | 11,921,590 |
| ເງິນຝາກມີກໍານົດທີ່ມີມື້ຄົບກໍານົດພາຍໃນ 1 ເດືອນ | - | - |
| | **122,549,466** | **130,943,847** |

## 22. ລາຍການທີ່ເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງປະກອບດ້ວຍທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນກັບທະນາຄານ. ພາກສ່ວນດັ່ງກ່າວຈະກ່ຽວຂ້ອງກັບທະນາຄານ ຖ້າວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ມີການຄວບຄຸມ (ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມ ໂດຍທະນາຄານ (ໃນນີ້ລວມມີ ທະນາຄານສໍານັກງານໃຫຍ່, ສາຂາ ແລະ ສະມາຊິກຂອງທະນາຄານ);
- ມີຜົນປະໂຫຍດນໍາກັນກັບທະນາຄານ ເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມ ທະນາຄານ

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນໍາ ທະນາຄານ

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສໍາຄັນຂອງ ຜູ້ບໍລິຫານຫລັກຂອງ ທະນາຄານ ຫຼື ທະນາຄານສໍານັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນກ່ຽວຂ້ອງແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດອໍານາດການໃນການອອກສຽງສ່ວນໃຫຍ່ຕໍ່ທະນາຄານທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງທີ່ມີແຜນໄດ້ຮັບຜົນປະໂຫຍດພາຍຫລັງອອກວຽກສໍາລັບພະນັກງານຂອງທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບ ທະນາຄານ.

**22. ລາຍການທີ່ເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງປີທີ່ສິ້ນສຸດວັນທີ 31 ທັນວາ 2020 ແລະ 31 ທັນວາ 2019 ມີດັ່ງນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ສາຍພົວພັນ* | *ລັກສະນະຂອງ ທຸລະກຳ* | *2020 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ພັນກີບ* | *2019 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ພັນກີບ* |
|---|---|---|---|---|
| ທະນາຄານ SATHAPANA ມະຫາຊົນ (ຜ່ານມາ ເອີ້ນວ່າ ທະນາຄານ ມາຣູຮານ ເຈແປນ ມະຫາຊົນ, ກຳປູ ເຈຍ) | ກຸ່ມສະມາຊິກ | ໂອນເງິນ | 558,622 | 70,340 |
| | | ໂອນເງິນ | (558,853) | (75,000) |

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2020 ແລະ 31 ທັນວາ 2019 ມີດັ່ງນີ້:

| | *ສາຍພົວພັນ* | *ລາຍການເຄື່ອນໄຫວ* | *31/12/2020 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ພັນກີບ* | *31/12/2019 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ພັນກີບ* |
|---|---|---|---|---|
| ທະນາຄານ SATHAPANA ມະຫາຊົນ (ຜ່ານມາ ເອີ້ນວ່າ ທະນາຄານ ມາຣູຮານເຈແປນ ມະຫາຊົນ, ກຳປູເຈຍ) | | | | |
| ບັນຊີເງິນຝາກທະນາຄານອື່ນ | ກຸ່ມສະມາຊິກ | ເງິນຝາກກະແສລາຍວັນ | 201,084 | 187,734 |

ຄ່າຕອບແທນໃຫ້ແກ່ສະມາຊິກຂອງຄະນະບໍລິຫານມີດັ່ງນີ້:

| | *2020 ພັນກີບ* | *2019 ພັນກີບ* |
|---|---|---|
| ເງິນເດືອນ | 4,566,039 | 2,294,878 |
| ໂບນັດ ແລະ ຜົນປະໂຫຍດ ອື່ນໆ | 1,278,280 | 469,973 |
| | **5,844,319** | **2,764,851** |

## 24. ເຫດການທີ່ເກີດຂຶ້ນພາຍຫລັງມື້ເອກະສານລາຍງານການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງມື້ໃບລາຍງານຖານະການເງິນທີ່ສົ່ງຜົນໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງທະນາຄານ.

ກະກຽມໂດຍ:

ທ່ານ ນາງ. Esme LAW
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທະນາຄານ ມາຣູຮານເຈແປນ ລາວ ຈຳກັດ
MARUHAN Japan Bank Lao Co.,Ltd

ທ່ານ. Anthony CHIN
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021